# ຈົດໝາຍຂ່າວ ລາວ-ອີຢູ FLEGT

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce



©Phetsaphone THANASACK

ສະບັບທີ 4 / 2017

## ສ ປປ ລາວ ກະກຽມເພື່ອການເຈລະຈາ ຄັ້ງທີ ສອງ ກັບ ສະຫະພາບເອີຣົບ ເພື່ອ ສົ່ງເສີມການຄ້າໄມ້ທີ່ຖືກກົດໝາຍ

ຄະນະຮັບຜິດຊອບທາງດ້ານວິຊາການ ໃນແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ໄດ້ຈັດກອງປະຊຸມ ເພື່ອປຶກສາຫາລື ກ່ຽວກັບຄວາມຄືບໜ້າໃນການຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ຂຶ້ນໃນວັນທີ 2 ສິງຫາ 2017 ທີ່ ນະຄອນຫຼວງວຽງຈັນ ເພື່ອເປັນການກຽມພ້ອມໃນການເຈລະຈາຄັ້ງທີ 2 ກັບ ສະຫະພາບເອີຣົບ ທີ່ຈະຈັດຂຶ້ນ ໃນທ້າຍເດືອນ ພະຈິກ ປີ 2017. ກອງປະຊຸມດັ່ງກ່າວ ໃຫ້ກຽດເປັນປະທານໂດຍ ທ່ານ ຊູຊາດ ໄຊຍະກຸມມານ, ຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງມີຕົວແທນມາຈາກຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ: ບັນດາກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນການສຶກສາ, ພາກເອກະຊົນ ແລະ ອົງກອນຕ່າງໆທີ່ສະໜັບສະໜູນແຜນງານດັ່ງກ່າວ.

ກອງປະຊຸມ ຄະນະຮັບຜິດຊອບດ້ານວິຊາການ ໃນຄັ້ງນີ້ ໄດ້ສຸມໃສ່ຄວາມຄືບໜ້າກ່ຽວກັບມາດຖານຕ່າງໆ ທາງດ້ານນິຍາມຄວາມຖືກຕ້ອງຂອງໄມ້ ທີ່ໄດ້ຮັບການປັບປຸງເພີ່ມເຕີມໃນຫຼາຍເດືອນທີ່ຜ່ານມາໂດຍກຸ່ມຊ່ຽວຊານສະເພາະດ້ານ. ພາຍຫຼັງການເຈລະຈາຄັ້ງທຳອິດທີ່ໄດ້ຈັດຂຶ້ນໃນເດືອນເມສາ ປີ 2017 ທີ່ຜ່ານມາ ຄະນະເຈລະຈາຈາກສະຫະພາບເອີຣົບໄດ້ມີ ຄຳຖາມ ແລະ ຄຳເຫັນຕ່າງໆ ຕໍ່ບັນດາມາດຖານ ໃນຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍໃຫ້ແກ່ບັນດາກຸ່ມຊ່ຽວຊານສະເພາະດ້ານ ເພື່ອນຳໄປທົບທວນຄືນ.

ຕາງໜ້າຈາກກຸ່ມຊ່ຽວຊານສະເພາະດ້ານໄດ້ນຳສະເໜີມາດຖານຕ່າງໆທີ່ໄດ້ຮັບການປັບປຸງຄືນ ສຳລັບໄມ້ ທີ່ມາຈາກສວນປູກ, ເຂດຫັນປ່ຽນທີ່ດິນປ່າໄມ້ເພື່ອການພັດທະນາ, ແລະ ປ່າຜະລິດ ລວມທັງ ມາດຖານສຳລັບ ອຸດສາຫະກຳປຸງແຕ່ງໄມ້ ແລະ ການຄ້າ ແລະ ພັນທະຕໍ່ວຽກງານແຮງງານໃນຂະແໜງປຸງແຕ່ງໄມ້. ໃນທີ່ປະຊຸມ, ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ປະກອບຄຳຄິດຄຳເຫັນ, ສະເໜີຄຳເຫັນ ແລະ ສະແດງທັດສະນະຕໍ່ກັບສະບັບປັບປຸງ ເພື່ອປະກອບສ່ວນເຂົ້າໃນການປັບປຸງ ໃນອາລະຕໍ່ໄປ.

ນອກນັ້ນ ຍັງມີຜູ້ຕາງໜ້າ ຈາກສຳນັກງານສະຫະພາບເອີຣົບປະຈຳ ປະເທດລາວ ແລະ ຕົວແທນຈາກ ສະຖາບັນປ່າໄມ້ເອີຣົບ (EFI) ຍັງໄດ້ເຂົ້າຮ່ວມ ເພື່ອຊ່ວຍແນະນຳວິທີການ ແລະ ໄດ້ຍົກບາງຄຳຖາມທີ່ໄດ້ຖືກສະເໜີໃນການເຈລະຈາໃນເດືອນ ເມສາ ທີ່ຜ່ານມາ. ຕົວແທນຈາກ ສະຖາບັນປ່າໄມ້ເອີຣົບ ມີຄວາມສົນໃຈສອບຖາມເຖິງຂໍ້ມູນກ່ຽວກັບການຢຸດຕິການຂຸດຄົ້ນໄມ້ໃນເຂດປ່າຜະລິດຊົ່ວຄາວ, ລວມເຖິງໄລຍະເວລາຂອງການສິ້ນສຸດຂອງຄຳສັ່ງຢຸດຊົ່ວຄາວດັ່ງກ່າວ ພ້ອມທັງແນວໂນ້ມຂອງການຂຸດຄົ້ນໄມ້ ແລະ ຄ້າຂາຍໄມ້ທີ່ຈະເກີດຂຶ້ນຕາມມາ.

ກອງປະຊຸມ ຄະນະຮັບຜິດຊອບດ້ານວິຊາການ ຍັງໄດ້ສົນທະນາກ່ຽວກັບບັນດາມາດຖານໄມ້ ທີ່ມາຈາກເຂດຫັນປ່ຽນທີ່ດິນເພື່ອການພັດທະນາ ທີ່ບັນດາພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີ ເຊິ່ງເປັນໜຶ່ງໃນຫົວຂໍ້ທີ່ມີຄວາມສຳຄັນ ທີ່ຈະຕ້ອງໄດ້ຮັບການປັບປຸງແກ້ໄຂ. ຜູ້ເຂົ້າຮ່ວມໄດ້ປຶກສາຫາລືກ່ຽວກັບຄວາມສອດຄ່ອງ ແລະ ຄວາມສຳຄັນ ຂອງການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ແລະ ແຜນການຕິດຕາມ ແລະ ຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMMP), ແລະ ຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ທີ່ຕັດມາຈາກເຂດຫັນປ່ຽນທີ່ດິນເພື່ອການພັດທະນາ ພາຍໃຕ້ໂຄງການທີ່ໄດ້ເຮັດການປະເມີນ ວ່າຈະເປັນແບບໃດ. ອີງຕາມຂໍ້ມູນຈາກສະຖາບັນການສຶກສາ, ອົງການຈັດຕັ້ງທາງສັງຄົມ ແລະ ຊ່ຽວຊານຕ່າງປະເທດ, ຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນຫຼາຍທັດສະນະ ແລະ ເຫັນດີທີ່ຈະສືບຕໍ່ການປຶກສາຫາລືດັ່ງກ່າວໃນທີ່ປະຊຸມຂອງ ກຸ່ມຊ່ຽວຊານສະເພາະດ້ານຕື່ມ.

ໃນກອງປະຊຸມດັ່ງກ່າວ ຜູ້ເຂົ້າຮ່ວມຍັງໄດ້ຮັບຂໍ້ມູນກ່ຽວກັບ ເຕັກໂນໂລຢີ ການສຳຫຼວດທາງໄກ ເຊັ່ນ: ການນຳໃຊ້ດາວທຽມ ແລະ ໂດຼນ ເພື່ອຕິດຕາມການຕັດໄມ້ທຳລາຍປ່າ ແລະ ການຕັດໄມ້ຜິດກົດໝາຍ. ໃນຕອນທ້າຍຂອງກອງປະຊຸມ, ທ່ານ ຊູຊາດ ໄຊຍະກຸມມານ ຍັງໄດ້ກ່າວວ່າ ກຸ່ມຊ່ຽວຊານສະເພາະດ້ານ ແຕ່ລະກຸ່ມຕ້ອງໄດ້ສືບຕໍ່ວຽກງານໃນການພັດທະນາມາດຖານ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ປັບປຸງແກ້ໄຂບັນດາຫົວຂໍ້ທີ່ຍົກຂຶ້ນ ໂດຍບັນດາພາກສ່ວນທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນຈາກ ສະຖາບັນປ່າໄມ້ເອີຣົບ ແລະ ສະຫະພາບເອີຣົບ, ກ່ອນການເຈລະຈາຄັ້ງຕໍ່ໄປທີ່ຈະໄດ້ຈັດຂຶ້ນໃນເດືອນ ພະຈິກ ທີ່ຈະມາເຖິງນີ້.

**ເພີ່ມເຕີມໄດ້ທີ່ FLEGTlaos.com**

ບົດນຳສະເໜີໃນກອງປະຊຸມ ຄະນະຮັບຜິດຊອບດ້ານວິຊາການ TWG ໃນວັນທີ 2 ສິງຫາ 2017 ສາມາດເຂົ້າເບິ່ງໄດ້ທີ່ນີ້: ລາວ / ອັງກິດ

## ກອງປະຊຸມເຄືອຂ່າຍ FAO FLEGT

ກອງປະຊຸມເຄືອຂ່າຍ FAO FLEGT ໄດ້ຈັດຂຶ້ນໃນວັນທີ 28 ກໍລະກົດ 2017 ທີ່ຜ່ານມາ ເພື່ອຮັບຮອງ ສອງ ໂຄງການໃໝ່ ຢ່າງເປັນທາງການ, ເຊິ່ງໄດ້ຮັບການສະໜັບສະໜູນໂດຍ ອົງການ ອາຫານ ແລະ ການກະເສດ, ເພື່ອສົ່ງເສີມພາລະບົດບາດຂອງອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ໃນການສະໜັບສະໜູນແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້.

ທ່ານສາມາດດາວໂຫຼດ ເອກະສານນຳສະເໜີຕ່າງໆພາຍໃນກອງປະຊຸມໄດ້ທີ່ນີ້.

ການປະກາດເປີດຮັບບົດສະເໜີໂຄງການໃໝ່ ສຳລັບປະເທດທີ່ເຂົ້າຮ່ວມ ແຜນງານ FLEGT VPA ຈະປິດລົງໃນວັນທີ 15 ກັນຍາ 2017. ເອກະສານຕ່າງໆລວມທັງຄຳແນະນຳສະເພາະສຳລັບປະເທດລາວ ສາມາດເຂົ້າເບິ່ງໄດ້ທີ່: http://www.fao.org/in-action/eu-fao-flegt-programme/available-assistance/2017-vpa-call-for-proposals/en/

## ການນຳໃຊ້ພາບຖ່າຍທາງໄກ ເພື່ອຄວບຄຸມ ການຕັດໄມ້ທີ່ຜິດກົດໝາຍໃນເຂດຫັນປ່ຽນທີ່ດິນເພື່ອການພັດທະນາ

ການຫັນປ່ຽນທີ່ດິນປ່າໄມ້, ເຊິ່ງໝາຍເຖິງການຕັດໄມ້ໃນປ່າທຳມະຊາດໃນຂອບເຂດໃດໜຶ່ງ ເພື່ອພັດທະນາໂຄງການກະສິກຳ ແລະ ພື້ນຖານໂຄງລ່າງ ເຊັ່ນ ເຂື່ອນໄຟຟ້ານ້ຳຕົກ, ຖະໜົນຫົນທາງ ແລະ ບໍ່ແຮ່ຕ່າງໆ, ຊຶ່ງເຂດດັ່ງກ່າວເປັນແຫຼ່ງສະໜອງໄມ້ທີ່ສຳຄັນ ແລະ ຍັງມີທ່າອ່ຽງທີ່ຈະສືບຕໍ່ໄປຕື່ມອີກປະມານ 5 ຫາ 10 ປີ. ເຖິງຢ່າງໃດກໍຕາມ, ບາງຄັ້ງໂຄງການເຫຼົ່ານີ້ ໄດ້ຖືກໃຊ້ເປັນເຄື່ອງມືໃນການລັກລອບຕັດໄມ້. ໃນການເຂົ້າຮ່ວມ ການເຈລະຈາ ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA) ກັບ ສະຫະພາບເອີຣົບ, ຂະແໜງປ່າໄມ້ລາວ ຕ້ອງຮັບປະກັນໄດ້ເຖິງແນວທາງ ແລະ ວິທີການຈັດຕັ້ງປະຕິບັດ ທີ່ໂປ່ງໃສ ເພື່ອຢັ້ງຢືນໄດ້ເຖິງຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ທີ່ມາຈາກເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ສະແດງໃຫ້ເຫັນໄດ້ວ່າ ໄມ້ທີ່ຢູ່ພື້ນທີ່ອ້ອມຮອບຈະບໍ່ຖືກຕັດຢ່າງຜິດກົດໝາຍ. ຂະບວນການນີ້ຈະປະກອບດ້ວຍການເກັບກຳຂໍ້ມູນ ກ່ຽວກັບ ປະເພດ ແລະ ບໍລິມາດໄມ້ໃນພື້ນທີ່ດັ່ງກ່າວ, ການໝາຍເຂດອ່າງໂຕ່ງ ລວມທັງການຕິດຕາມການຂຸດຄົ້ນໄມ້ ໂດຍອີງໃສ່ລະບົບຄຸ້ມຄອງຕ່ອງໂສ້ການສະໜອງໄມ້ (COC). ນອກຈາກນັ້ນ, ການປະເມີນພາຍຫຼັງການຕັດໄມ້ ແມ່ນມີຄວາມສຳຄັນເພື່ອຢັ້ງຢືນຄວາມຖືກຕ້ອງກັບແຜນຄຸ້ມຄອງ ແລະ ຕິດຕາມສັງຄົມ ແລະ ສິ່ງແວດລ້ອມ (ESMMP) ເພື່ອຢັ້ງຢືນວ່າ ດິນປ່າໄມ້ຢູ່ໃກ້ຄຽງແມ່ນບໍ່ໄດ້ຮັບຜົນກະທົບ.




ຮູບພາບດາວທຽມເຜີຍການຕັດໄມ້ທີ່ຜິດກົດໝາຍ (ສີມ້ວງສະແດງຮູບຫຼາຍຫຼ່ຽມ) ນອກເຂດສຳປະທານຫີນປູນທີ່ເປັນທາງການ (ເສັ້ນສີແດງ).

*ແຫຼ່ງຂໍ້ມູນ: WWF, 2015. Assessment of Scope of Illegal Logging in Laos and Associated Trans-Boundary Timber Trade*

ດັ່ງທີ່ໄດ້ປຶກສາຫາລືໃນກອງປະຊຸມ ຄະນະຮັບຜິດຊອບດ້ານວິຊາການ ກ່ຽວກັບ ນິຍາມຄວາມຖືກຕ້ອງຂອງໄມ້ ສຳລັບໄມ້ທີ່ມາຈາກ ເຂດຫັນປ່ຽນທີ່ດິນປ່າໄມ້, ການໃຊ້ ພາບຖ່າຍທາງໄກ ເພື່ອການສຳຫຼວດ ຂຶ້ນທະບຽນ ແລະ ການຕິດຕາມ ແມ່ນມີຄວາມຈຳເປັນ ໃນການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ແລະ ຂະບວນການຢັ້ງຢືນ ໃນອານາຄົດ. ໃນ ສປປ ລາວ, ຈຳນວນດາວທຽມ ແລະ ການບໍລິການຖ່າຍພາບຈາກມູມສູງ (Drone) ແມ່ນສາມາດໃຊ້ໄດ້ ໃນການກວດກາໃນໄລຍະໄກ ລວມທັງການປະເມີນຜົນໂດຍລະອຽດ, ການບໍລິການເຫຼົ່ານີ້ ແຕກຕ່າງກັນໄປ ໃນເລື່ອງ ຄວາມລະອຽດ, ການປະມວນຜົນ, ການບິນ ແລະ ການສຳຫຼວດຄືນ, ຄ່າໃຊ້ຈ່າຍ (ທາງດ້ານຂໍ້ມູນ), ການຝຶກອົບຮົມ ແລະ ໂປຣແກຣມ, ແລະ ສາມາດເລືອກໄດ້ໂດຍອີງຕາມຄວາມຕ້ອງການຂອງປະເທດເຮົາ. ພາຍໃຕ້ແຜນງານ FLEGT ປະຈຳ ລາວ, ລະບົບຕ່າງໆເຫຼົ່ານີ້ ສາມາດສະໜອງຂໍ້ມູນທີ່ມີຄວາມລະອຽດສູງ, ຂໍ້ມູນທີ່ມີການລາຍງານແບບທັນເຫດການ ໃນຮູບແບບຂອງແຜນທີ່ການປ່ຽນແປງການປົກຫຸ້ມຂອງປ່າ ແລະ ການຕັດໄມ້ທຳລາຍປ່າຈະເຕືອນໃນຮູບແບບທີ່ງ່າຍໃນການນຳໃຊ້ ເພື່ອລະບຸເຂດທີ່ມີການຕັດໄມ້ທີ່ຜິດກົດໝາຍ ແລະ ການຕັດໄມ້ທຳລາຍປ່າ, ພ້ອມທັງຍັງເປັນການສົ່ງເສີມ ແຜນງານ REDD+ ອີກດ້ວຍ. ຖ້າຫາກວ່າຂໍ້ມູນທີ່ໄດ້ຮັບມານັ້ນຖືກນຳໃຊ້ເພື່ອບັງຄັບໃຊ້ນະໂຍບາຍຕ່າງໆ ຕົວຢ່າງເຊັ່ນ ໂດຍການຮັບປະກັນວ່າການໝາຍເສັ້ນເຂດແດນຂອງເຂດຫັນປ່ຽນທີ່ດິນປ່າໄມ້ແມ່ນບໍ່ຖືກບຸກລຸກ, ເຕັກໂນໂລຍີການເຝົ້າຕິດຕາມທາງໄກ ແມ່ນສາມາດເພີ່ມຄວາມໂປ່ງໃສ ແລະ ສາມາດເພີ່ມເຕີມໃສ່ລະບົບການຕິດຕາມໂດຍລວມ.

## ກອງປະຊຸມຄະນະກຳມະທິການສະຫະພາບເອີຣົບກ່ຽວກັບການຕັດໄມ້ທີ່ຜິດກົດໝາຍ ແລະ ການທຳລາຍປ່າໄມ້

ຄະນະກຳມະທິການສະຫະພາບເອີຣົບໄດ້ເຊື້ອເຊີນຕົວແທນຈາກທົ່ວໂລກຫຼາຍກວ່າ 250 ທ່ານ ຈາກພາກລັດ, ຂະແໜງ ປຸງແຕ່ງໄມ້, ອົງການຈັດຕັ້ງທາງສັງຄົມ ແລະ ອົງການສາກົນຕ່າງໆ ເພື່ອປຶກສາຫາລືວຽກງານໃນອານາຄົດກ່ຽວກັບການແກ້ໄຂບັນຫາ ການທຳລາຍປ່າໄມ້ ແລະ ການຕັດໄມ້ທີ່ຜິດກົດໝາຍ.

ຕົວແທນ ສາມທ່ານ ຈາກ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ ໃນລະຫວ່າງວັນທີ 21 ຫາ 23 ມິຖຸນາ 2017 ທີ່ຜ່ານມາ ທີ່ປະເທດ ແບນຊິກ ແລະ ໄດ້ປະກອບສ່ວນເຂົ້າໃນການສົນທະນາກ່ຽວກັບການພັດທະນາແຜນການເຮັດວຽກຫຼາຍປີ ໃນອານາຄົດ ເພື່ອຈັດຕັ້ງປະຕິບັດ ແຜນດຳເນີນງານ EU FLEGT, ລວມທັງ ໂອກາດຕ່າງໆເພື່ອຍົກລະດັບແຜນດຳເນີນງານ EU ກ່ຽວກັບການຕັດໄມ້ທຳລາຍປ່າ ແລະ ການເຊື່ອມໂຊມຂອງປ່າ. ຕົວແທນຈາກປະເທດລາວ ລວມມີ 3 ທ່ານ ຈາກສາມພາກສ່ວນຄື: ທ່ານນາງ ນິລະພາ ວໍລະຈິດ, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້; ທ່ານນາງ ສຸພາວັນ ທ່ຽງຈັນໄຊ, ບໍລິສັດບໍວລະພາ ຈຳກັດ; ແລະ ທ່ານ ຄຳບອນ ພາສຸກ, ອະນຸລັກສັດປ່າ. ທ່ານສາມາດ ດາວໂຫຼດ ເອກະສານຕ່າງໆພາຍໃນກອງປະຊຸມໄດ້ທີ່ນີ້.


**ຕິດຕໍ່ສອບຖາມ ແລະ ສິ່ງຂ່າວໄດ້ທີ່:**

ຫ້ອງການປະສານງານ FLEGT

ກົມກວດກາປ່າໄມ້

ທາດດຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ

ໂທລະສັບ: +856-21-255 264

ໂທລະສານ: +856-21-255 263

ອີເມລ໌: info@flegtlaos.com

www.FLEGTlaos.com